NSW GOVERNMENT | Education & Communities

# Getting ready for school

A guide for parents of a child with disability

# ກຽມຕົວໃຫ້ພ້ອມສຳລັບໂຮງຮຽນ

ຄຳແນະນຳສຳລັບບັນດາພໍ່ແມ່ທີ່ມີລູກທີ່ມີ ຄວາມພິການ







Lao



ການເລີ້ມເຂົ້າຮຽນຊັ້ນ Kindergarten ເປັນບາດກ້າວທີ່ໜ້າຕື່ນເຕັ້ນໃນຊີວິດຂອງ ເດັກທຸກໆຄົນ. ການເລືອກໂຮງຮຽນໃຫ້ລູກ ຂອງທ່ານເປັນການຕັດສິນໃຈອັນສຳຄັນ ແລະສຳລັບບັນດາພໍ່ແມ່ທີ່ມີລູກພິການ ການຕັດ ສິນໃຈນີ້ອາດຈະມີຫຼາຍຢ່າງ ກ່ຽວພັນນຳ.

ຄຳແນະນຳນີ້ໄດ້ຈັດແຕ່ງຂຶ້ນເພື່ອຊ່ວຍທ່ານ ໃຫ້ຜ່ານການກະກຽມ ໃນການເລືອກໂຮງຮຽນທີ່ເໝາະສົມກັບຄວາມຕ້ອງການຂອງ ລູກທ່ານທີ່ສຸດ.

## ຈະເລີ້ມຕົ້ນຈາກໃສ

- ຖ້າທ່ານມີລູກທີ່ມີຄວາມພິການຂໍແນະ ນໍາໃຫ້ທ່ານຕິດຕໍ່ກັບໂຮງຮຽນໃນທ້ອງຖິ່ນຂອງທ່ານ ຫຼື ຫ້ອງການເຂດ 12ເດືອນກ່ອນທີ່ລູກທ່ານຈະເລີ້ມເຂົ້າໂຮງຮຽນ.
- ຖ້າລູກທ່ານຕ້ອງການຄວາມຊ່ວຍເຫຼືອ ໃນການນໍາໃຊ້ສິ່ງອໍານວຍຄວາມສະດວກ ຢ່າງໃດຢ່າງໜຶ່ງ ຂໍແນະນໍາໃຫ້ທ່ານ ຕິດຕໍ່ ໂດຍກົງກັບໂຮງຮຽນທ້ອງຖິ່ນຂອງທ່ານ ຫຼື ຫ້ອງການເຂດ ສອງປີກ່ອນເວລາຈະເລີ້ມ ເຂົ້າຮຽນ. ອັນນີ້ຈະເປັນການໃຫ້ເວລາ ແກ່ ທາງ ກະຊວງເພື່ອຮັບປະກັນວ່າທາງເລືອກ ໂຮງຮຽນ ຂອງທ່ານນັ້ນໄດ້ຖືກລະບຸໄວ້ ແລະ ກະກຽມ ໂຄງສ້າງພື້ນຖານໃຫ້ພ້ອມໃນເວລາທີ່ລູກທ່ານເລີ້ມເຂົ້າຮຽນ.
- ໃນເວລາທີ່ທ່ານພົບກັບທ່ານຄູຈົ່ງນໍາເອົາໜັງສືການແພດ ແລະ ໜັງສືການປະເມີນ ການຮັກສາບໍາບັດຕ່າງໆທີ່ກ່ຽວພັນໄປໃຫ້ທ່ານຄູຮູ້ນໍາ.
- ຈົ່ງເວົ້າລົມກັບສະມາຊິກກຸ່ມອຸ້ມຊູຂອງ ທ່ານ (ເຊັ່ນ: ຄອບຄົວ, ໝູ່ເພື່ອນ, ທ່ານໝໍ, ແພດຊ່ຽວຊານກ່ຽວກັບເດັກ, ກຸ່ມຕໍ່ສູ້ເພື່ອສິດທິຄົນພິການ, ເຄືອຂ່າຍບໍລິການຊ່ວຍເຫຼືອຄົນພິການ, ໝໍກາຍພາບບໍາບັດ, ນັກ ຈິດວິທຍາ, ນັກບໍາບັດກ່ຽວກັບວິຊາຊີບ, ນັກບໍາບັດການເວົ້າ) ແລະບັນດາພໍ່ແມ່ ອື່ນໆ ທີ່ລູກທີ່ມີຄວາມພິການ ທີ່ຢູ່ໃນໂຮງຮຽນນັ້ນໆ ກ່ຽວກັບປະສົບປະ ການຂອງພວກເຂົາເຈົ້າ.
- ບໍລິການດ້ານກ່ອນເຂົ້າຮຽນແລະວັຍເດັກ ອ່ອນຂອງທ່ານກໍສາມາດຊ່ວຍທ່ານໄດ້ໃນຊ່ວງລະຍະຂ້າມຜ່ານໄປສູ່ການເຂົ້າ ໂຮງຮຽນ. ຖ້າລູກທ່ານຫາກບໍ່ໄດ້ຮັບ ການຊ່ວຍເຫຼືອຈາກບັນດາບໍລິການເຫຼົ່ານີ້ ທ່ານສາມາດຕິດຕໍ່ຫາ ໂຮງຮຽນທ້ອງຖິ່ນຂອງ ທ່ານ ຫຼື ຫ້ອງການເຂດຊຶ່ງອາດສາມາດ ສເນີໂຄງການ ຊ່ວງລະຍະຂ້າມຜ່ານໄປສູ່ການເຂົ້າໂຮງຮຽນແບບພິເສດທີ່ຢູ່ໃນເຂດ ຂອງທ່ານ. ທ່ານສາມາດຕິດຕໍ່ ຫ້ອງການເຂດຂອງທ່ານຈາກໂທຣະສັບຢູ່ເຮືອນຂອງທ່ານໂດຍໂທໝາຍເລກ 131 536.





## ທາງເລືອກຕ່າງໆໃນການຈົດຊື່ເຂົ້າຮຽນ

- ທົ່ວຣັດ NSW ນີ້ ກະຊວງສຶກສາແລະຊຸມຊົນ (Department of Education and Communities)(DEC) ໃຫ້ບໍຣິການຫຼາຍ ຢ່າງເພື່ອຊ່ວຍອູ້ມຊູພວກນັກຮຽນທີ່ມີຄວາມຕ້ອງການແບບພິເສດ.
- ໃນຖານະທີ່ເປັນພໍ່ແມ່ ຫຼື ຜູ້ດູແລເດັກທີ່ຖືກຮັບຮູ້ວ່າເປັນຄົນພິການທ່ານສາມາດພິຈາຣະນາທາງເລືອກໃນການຮຽນຕ່າງໆດັ່ງຕໍ່ໄປນີ້:
  - ໂຮງຮຽນໃນທ້ອງຖິ່ນຂອງທ່ານ
  - ຫ້ອງຮຽນພິເສດໃນໂຮງຮຽນທັມມະດາ
  - ໂຮງຮຽນພິເສດ (ໂຮງຮຽນສໍາລັບຈຸດປະສົງສະເພາະ)

## ຊອກຫາທາງເລືອກໂຮງຮຽນທີ່ເໝາະສົມ

ໂດຍຜ່ານການປຶກສາຫາລືກັບຄະນະໃຫ້ ຄວາມຊ່ວຍເຫຼືອດ້ານການຮຽນແລະການ ອູ້ມຊູຂອງໂຮງຮຽນທ່ານຄູຂອງໂຮງຮຽນ ຈະຊ່ວຍທ່ານຊອກຫາໂຮງຮຽນທີ່ເໝາະສົມກັບລູກທ່ານ ເພິ່ນຈະພິຈາຣະນາ ການເລືອກຂອງທ່ານ ຄວາມຕ້ອງການທາງດ້ານການຮຽນແລະການຊ່ວຍເຫຼືອແບບສະ ເພາະຂອງລູກທ່ານ ແລະ ໃຫ້ຢູ່ໃກ້ຄຽງກັບ ບັນດາບໍຣິການພິເສດໃນທ້ອງຖິ່ນຂອງທ່ານ. ຫ້ອງການເຂດໃນທ້ອງຖິ່ນຂອງທ່ານຍັງສາມາດຊ່ວຍທ່ານຊອກຫາທາງ ເລືອກທີ່ ເໝາະສົມສໍາລັບລູກທ່ານໄດ້ອີກດ້ວຍ.

## ການຈົດຊື່ເຂົ້າຮຽນຂອງເດັກທີ່ມີຄວາມພິການ

- ການຈົດຊື່ເຂົ້າຮຽນໃນຫ້ອງຮຽນທັມມະດາ ແມ່ນເຮັດຜ່ານໂຮງຮຽນທ້ອງຖິ່ນຂອງທ່ານ
- ການຈົດຊື່ເຂົ້າຮຽນໃນຫ້ອງຮຽນພິເສດ ຫຼື ເຂົ້າໂຮງຮຽນພິເສດແມ່ນເຮັດຜ່ານວິທີການທີ່ເອີ້ນວ່າຄະນະຈັດບ່ອນຮຽນຂອງພາກເຂດ.
- ຂໍ້ມູນກ່ຽວກັບເລື່ອງນີ້ສາມາດຊອກເອົາໄດ້ດ້ວຍການຕິດຕໍ່ຫ້ອງການເຂດຂອງທ່ານຈາກໂທຣະສັບຢູ່ເຮືອນຂອງທ່ານໂດຍ ໂທໝາຍເລກ 131 536.

## ເຮັດບັນຊີລາຍຊື່ໂຮງຮຽນທີ່ສັ້ນລົງ

- ທ່ານສາມາດໃຊ້ເຄື່ອງຊ່ວຍຊອກຫາ ໂຮງຮຽນທາງອອນລາຍເພື່ອລະບຸໂຮງຮຽນທ້ອງຖິ່ນຂອງທ່ານ ທີ່ www.schools.nsw.edu.au/schoolfind/locator/
  ຢູ່ບ່ອນນີ້ ທ່ານສາມາດຊອກຫາຕາມປະ ເພດຂອງໂຮງຮຽນສໍາລັບບັນດາໂຮງຮຽນພິເສດທີ່ເອີ້ນວ່າໂຮງຮຽນສໍາລັບຈຸດປະສົງສະເພາະ ແຕ່ຈົ່ງຈໍາໄວ້ວ່າການຈົດຊື່ເຂົ້າ ຮຽນໃນໂຮງຮຽນເຫຼົ່ານີ້ຕ້ອງຖືກຈັດການໂດຍຜ່ານຫ້ອງການເຂດຂອງທ່ານ. ທ່ານສາມາດຕິດຕໍ່ຫ້ອງການເຂດຂອງທ່ານຈາກໂທຣະສັບຢູ່ເຮືອນຂອງທ່ານໂດຍໂທໝາຍເລກ 131 536.
- ເຮັດນັດໝາຍເພື່ອພົບກັບທ່ານຄູຂອງໂຮງ ຮຽນທ້ອງຖິ່ນຂອງທ່ານເພື່ອປຶກສາຫາລືທາງເລືອກຕ່າງໆແລະຄວາມຕ້ອງການພິເສດຂອງລູກທ່ານ. ພໍ່ແມ່ຫຼາຍຄົນໄດ້ການອູ້ມຊູດ້ວຍການພາເອົາໝູ່ເພື່ອນ ຫຼື ພີ່ນ້ອງໄປນໍາ.
- ຈົ່ງນໍາເອົາການປະເມີນທາງແພດອັນໃໝ່ໆໄປນໍາໃນເວລາພົບທ່ານຄູເພື່ອຈະໄດ້ໃຫ້ພະນັກງານຂອງທາງກະຊວງໄດ້ຮູ້ນໍາ.
- ທ່ານອາດຈະຢາກກະກຽມບັນຊີຄໍາຖາມ ຫຼືບັນຫາຕ່າງໆທີ່ທ່ານມີກ່ຽວກັບຄວາມຕ້ອງ ການດ້ານການສຶກສາຂອງລູກທ່ານເພື່ອປຶກສາຫາລືຢູ່ໃນການປະຊຸມນີ້.



## ການຊ່ວຍເຫຼືອເພີ້ມ

ຖ້າລູກທ່ານມີຄວາມພິການ ຫຼື ມີຄວາມລຳບາກໃນການຮຽນ ແລະ ມີຄວາມຕ້ອງການການຊ່ວຍເຫຼືອເພີ້ມຢູ່ໃນໂຮງຮຽນ ກະຣຸນາຕິດຕໍ່ທ່ານຄູຢູ່ໂຮງຮຽນຂອງລູກທ່ານ ຫຼື ຫ້ອງການເຂດໃນທ້ອງຖິ່ນຂອງທ່ານ.

ບັນດາພໍ່ແມ່ແລະຜູ້ດູແລເປັນແຫຼ່ງຂໍ້ມູນອັນສຳຄັນກ່ຽວກັບຈຸດແຂງ ຄວາມສາມາດແລະຄວາມຕ້ອງການຂອງລູກໆຂອງພວກເຂົາ. ການຮ່ວມມືທີ່ດີລະຫວ່າງບັນດາພໍ່ແມ່ແລະໂຮງຮຽນຈະເປັນສິ່ງນຳພາໄປສູ່ຜົນຮັບທີ່ດີຂື້ນສຳລັບນັກຮຽນ.

ຄະນະອູ້ມຊູດ້ານການຮຽນໃນແຕ່ລະໂຮງ ຮຽນຊ່ວຍພວກນາຍຄູໃນຫ້ອງຮຽນເພື່ອໃຫ້ ເຂົ້າກັບຄວາມຕ້ອງການຂອງນັກຮຽນພວກເຂົາ. ບັນດາພໍ່ແມ່ແລະຜູ້ດູແລມີບົດບາດອັນສຳຄັນໃນວຽກງານຂອງຄະນະອູ້ມຊູການຮຽນດ້ວຍການມີສ່ວນໃນການປຶກສາຫາລືແລະການວາງແຜນສຳລັບຄວາມຕ້ອງຂອງລູກໆຂອງພວກເຂົາ.

ໂຮງຮຽນຫຼວງໃນຣັດ NSW ໃຫ້ການອູ້ມຊູ ເພີ້ມຕື່ມຫຼາຍຢ່າງແກ່ພວກນັກຮຽນທີ່ມີຄວາມພິການ ຫຼື ມີຄວາມລຳບາກໃນການຮຽນຕາມຄວາມຕ້ອງການຂອງນັກຮຽນແຕ່ລະຄົນ.

ການອູ້ມຊູນີ້ອາດຈະຮວມເຖິງ:

- ການປ່ຽນແປງຢູ່ໃນຫ້ອງຮຽນທີ່ນາຍຄູເຮັດໃນໂຄງການການສອນແລະການຮຽນໃນແຕ່ລະມື້
- ການເຂົ້າເຖິງພະນັກງານທີ່ຄວາມຊ່ຽວ ຊານສະເພາະຊຶ່ງໃຫ້ຄວາມອູ້ມຊູແກ່ນັກຮຽນແລະນາຍຄູຂອງພວກເຂົາ
- ການຊ່ວຍເຫຼືອເພີ້ມໃນຫ້ອງຮຽນຈາກພະນັກງານໃຫ້ຄວາມອູ້ມຊູ
- ການຈັດຫາວັດຖຸແລະເຄື່ອງອຸປະກອນ ພິເສດ
- ການເຂົ້າຫາການຝຶກຫັດພິເສດສຳລັບບັນດານາຍຄູແລະພະນັກງານໃຫ້ຄວາມ ອູ້ມຊູ

## ໄດ້ຮັບສິ່ງທີ່ດີທີ່ສຸດຈາກໂຮງຮຽນ

- ຫຼັງຈາກທີ່ທ່ານໄດ້ເລືອກເອົາໂຮງຮຽນນຶ່ງສຳລັບລູກທ່ານແລ້ວ ຈົ່ງເຂົ້າໄປພົວພັນ ໃຫ້ຫຼາຍທີ່ສຸດຕາມທີ່ທ່ານສາມາດ. ຈົ່ງສົ່ງເສີມ ຄວາມສຳພັນທີ່ດີກັບນາຍຄູ ຂອງລູກທ່ານແລະໂຮງຮຽນ. ມັນຈະເປັນການຊວຍໃຫ້ພະນັກງານໃນໂຮງຮຽນຮູ້ ຈັກກັບທ່ານແລະລູກຂອງທ່ານໄດ້ດີຂຶ້ນ.
- ຈົ່ງຕິດຕໍ່ກັບນາຍຄູຂອງລູກທ່ານໃຫ້ສມ່ຳ ສເມີເພື່ອວ່າທ່ານຈະສາມາດສືບຕໍ່ໂອ້ລົມເລື້ອງໂຄງການການຮຽນ ແລະ ຄວາມ ກ້າວໜ້າ ຂອງລູກທ່ານ ແລະ ບັນຫາໃໝ່ອັນໃດນຶ່ງທີ່ອາດຈະມີຂຶ້ນກັບທ່ານຫຼື ໂຮງຮຽນ.
- ປຶກສາຫາລືໃນທາງທີ່ມີປະສິດທິພາບທີ່ສຸດເພື່ອຮັກສາການສື່ສານທີ່ດີລະຫວ່າງເຮືອນຂອງທ່ານແລະໂຮງຮຽນໄວ້. ໃນຖານະທີ່ເປັນພໍ່ແມ່ທ່ານຮູ້ຈັກລູກຂອງທ່ານດີທີ່ສຸດ. ຈົ່ງເປັນຜູ້ອູ້ມຊູທີ່ສຳຄັນສຳລັບລູກທ່ານ.
- ຖ້າທ່ານຕ້ອງການນາຍພາສາເພື່ອຊ່ວຍທ່ານຕິດຕໍ່ຫາໂຮງຮຽນ ກະຣຸນາໂທຫາ ບໍຣິການນາຍພາສາ ທາງໂທຣະສັບ ຕາມ ໝາຍເລກ 131 450 ແລະຂໍເອົານາຍພາ ສາທີ່ປາກ ພາສາລາວ. ຜູ້ຮັບສາຍ ຈະໂທ ຫາໂຮງຮຽນ ແລະ ເອົານາຍພາສາທາງ ໂທຣະສັບເພື່ອຊ່ວຍໃນການໂອ້ລົມ ຂອງ ທ່ານ. ຖ້າເປັນໄປໄດ້ ທາງໂຮງຮຽນຈະ ຈັດຫາ ນາຍພາສາມາຮ່ວມການປະຊຸມ ຢູ່ໂຮງຮຽນ ຖ້າຫາກທ່ານຂໍໄປ. ບໍຣິການເຫຼົ່ານີ້ແມ່ນບໍ່ຄິດຄ່າໃດໆ.








## ແຫຼ່ງຂໍ້ມູນເພີ້ມຕື່ມ

- www.schools.nsw.edu.au/gotoschool/enrolment/index.php (ເວັບໄຊຕ໌ພາສາອັງກິດ)
- *ໃຜຈະເປັນຜູ້ສອນລູກຂອງຂ້ອຍ? (Who's Going to Teach My Child?)* (ພາສາອັງກິດເທົ່ານັ້ນ) www.schools.nsw.edu.au/media/downloads/schoolsweb/studentsupport/programs/lrngdificulties/whoteach.pdf
- ບັນດາຂົວຕໍ່ທີ່ສຳຄັນ DVD (Critical Bridges DVD) (ພາສາອັງກິດເທົ່ານັ້ນ) www.det.nsw.edu.au/detresources/critbridges_YKSeRaDPnn.pdf
- ການເລີ້ມເຂົ້າໂຮງຮຽນ DVD (Starting School DVD) (ຂໍ້ມູນນີ້ມີເປັນພາສາ ອາຣາບິກ ກວາງຕຸ້ງ ດາຣີ ດິງກາ ອັງກິດ ເກົາຫຼີ ແມນດາຣິນ ແລະ ຫວຽດນາມ) ໂທຣະສັບຫາ Gowrie NSW ຕາມໝາຍເລກ (02) 8571 9700 ເພື່ອສັ່ງເອົາສຳເນົານຶ່ງ.

**NSW Department of Education and Communities**

### ເບີໂທຣະສັບເພື່ອການຕິດຕໍ່ຂອງຫ້ອງການເຂດ

**Regional office contact numbers**

| | |
|---|---|
| Hunter/Central Coast | 4924 9999 |
| Illawarra & South Coast | 4222 2929 |
| New England | 6755 5934 |
| North Coast | 6652 0500 |
| Northern Sydney | 9886 7690 |
| Riverina | 6937 3871 |
| South Western Sydney | 9796 5446 |
| Sydney | 9217 4877 |
| Western NSW | 6841 2110 |
| Western Sydney | 9208 9359 |

# ບ່ອນການຕິດຕໍ່ຂອງຂ້ອຍ (My contacts)

ໂຮງຮຽນທ້ອງຖິ່ນ: (Local school:)

ຊື່ຂອງທ່ານຄູໃຫຍ່: (Principal name:)

ເລກໂທຣະສັບ: (Phone:)

ບັນທຶກ: (Notes:)

ຫ້ອງການເຂດ: (Regional office)

ຊື່ຂອງຜູ້ຕິດຕໍ່: (Contact name)

ເລກໂທຣະສັບ: (Phone:)

ບັນທຶກ: (Notes:)

© April 2012
NSW Department of Education and Communities

GPO Box 33
Sydney NSW 2001
Australia
T (02) 9561 8000
www.det.nsw.edu.au

NSW GOVERNMENT Education & Communities

Lao